ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR






# Handing over of certificates for G5 English Audio Recording Media Report

## (10 – 22 May 2023)

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ

Basic Education Quality and Access in Lao PDR is managed by Tetra Tech International Development, on behalf of the Australian Government.

# Handing over of certificates for G5 English Audio Recording Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2023-05-10 | Newspaper | Education, Science and Sport Daily News | Front and page 2 |
| 2023-05-11 | Newspaper | KPL Pathet Lao (Lao) | Front and page 2 |
| 2023-05-11 | Newspaper | Vientiane Mai | Page 5 |
| 2023-05-15 | Newspaper | Economic and Commerce | Page 3 |
| 2023-05-05 | Social Media | Vientiane International School Facebook | 37K Followers |
| 2023-05-10 | Social Media | Edu-Sport TV online Facebook | 47K Followers |
| 2023-05-10 | Social Media | Vientiane Mai Facebook | 44K Followers |
| 2023-05-10 | Social Media | Edu-Sport Daily News Facebook | 6.3K Followers |
| 2023-05-10 | Social Media | Pasaxon Facebook | 21K Followers |
| 2023-05-16 | Social Media | Tetra Tech International Development Facebook | 34K Followers |
| 2023-05-16 | Social Media | Tetra Tech International Development LinkedIn | 55K Followers |
| 2023-05-22 | Social Media | Edu-Sport Daily News Facebook | 6.3K Followers |
| 2023-05-10 | Website | Vientiane Mai Website | Read article here |
| 2023-05-10 | Website | KPL English Website | Read article here |
| 2023-05-12 | Website | Lao Economic Daily Website | Read article here |
| 2023-05-12 | Website | BEQUAL Website | Read article here |
| 2023-05-11 | Radio | Public Security Radio<br>FM 101.5 | |
| 2023-05-11 | Radio | Army Radio<br>FM 99.7 | |
| 2023-05-11 | Radio | Lao National Radio<br>FM 103.7 | |
| 2023-05-11 | Radio | Vientiane Radio<br>FM 105.5 | |
| 2023-05-11 | Radio | Lao Youth Radio<br>FM 90.00 MHZ | |
| 2023-05-11 | Radio | Education Radio<br>FM 103.7 MHZ | |
| 2023-05-15 | WhatsApp | MT-PT WhatsApp and FB groups | 19 groups with trainers<br>+/- 660 members |
| 2023-05-15 | WhatsApp | PESS-DESB | 18 Provincial groups<br>452 members |
| 2023-05-15 | WhatsApp | ETSP | 3 groups with ethnic teachers<br>98 members |

| | | | |
|---|---|---|---|
| 2023-05-15 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members |
| 2023-05-15 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2023-05-15 | WhatsApp | Target TTC | Key coordinators from the 3 target TTCs<br>17 members |

# Media Clipping

| | | | |
|---|---|---|---|
| 2023-05-10 | Newspaper | Education, Science and Sport Daily News | Front and page 2 |

## ສສກ ຍ້ອງຍໍນັກຮຽນຕ່າງປະເທດ ປະກອບສ່ວນບັນທຶກສຽງຫຼັກສູດ ວິຊາພາສາອັງກິດ ປ.5 ສະບັບປັບປຸງໃໝ່

ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ ຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ) ໄດ້ຈັດພິທີຍ້ອງຍໍນັກຮຽນຕ່າງຊາດ ທີ່ຮຽນຢູ່ໂຮງຮຽນນານາຊາດ ວຽງຈັນ ໄດ້ປະກອບສ່ວນໃນການບັນທຶກສຽງ ສໍາລັບຫຼັກສູດວິຊາພາສາອັງກິດ ຂັ້ນ ປ.5 ສະບັບປັບປຸງໃໝ່ ເມື່ອບໍ່ດົນມານີ້ ທີ່ໂຮງຮຽນນານາຊາດວຽງຈັນ, ໂດຍໃຫ້ກຽດຕາງໜ້າ...

ອ່ານຕໍ່ໜ້າ 2



| | | | |
|---|---|---|---|
| 2023-05-11 | Newspaper | KPL Pathet Lao (Lao) | Front and page 2 |

## ຍ້ອງຍໍນັກຮຽນຕ່າງປະເທດ ທີ່ບັນທຶກສຽງຫລັກສູດພາສາອັງກິດ ຊັ້ນ ປ5

ຂປລ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ສະຖານທູດອົດສະຕຣາລີ ປະຈໍາລາວ ມອບໃບຍ້ອງຍໍ ໃຫ້ນັກຮຽນ 6 ນ້ອງ ທີ່ໄດ້ຮ່ວມກັນບັນທຶກສຽງວິຊາພາສາອັງກິດ ສໍາລັບຫລັກສູດ ຊັ້ນ ປ5 ສະບັບປັບປຸງໃໝ່ ໃນອາທິດຜ່ານມາ, ຕາງໜ້າມອບ ໂດຍທ່ານ ອ່ອນແກ້ວ ນວນນະວົງ ຜູ້ອໍານວຍການສະຖາບັນຄົ້ນຄວ້າວິທະຍາສາດ ການສຶກສາ ແລະ ທ່ານ ນາງ ວາເນັດຊ້າ ເຣກາຕີ້ ເລຂາເອກສະຖານທູດອົດສະຕຣາລີ ປະຈໍາ ສປປ ລາວ.

ທ່ານ ອ່ອນແກ້ວ ນວນນະວົງ ໄດ້ໃຫ້ຮູ້ວ່າ: ຄູ່ມືປະກົບຈະນໍາໃຊ້ຟາຍສຽງ ໃນການກະກຽມບົດຮຽນ ແລະ ຈະເປີດສອນໃນຫ້ອງຮຽນໂດຍກົງ ເຊິ່ງນັກຮຽນຈະສາມາດຟັງການເວົ້າ, ສໍານຽງທີ່ຫລາກຫລາຍໃນພາສາອັງກິດ ດ້ວຍສຽງຂອງຜູ້ທີ່ເປັນເຈົ້າຂອງພາສາໂດຍຜູ້ບັນທຶກສຽງໄດ້ບັນທຶກສຽງໃນບົດສົນທະນາ ທີ່ມີຫລາຍບົດບາດເພື່ອໃຫ້ບົດຮຽນມີຊີວິດຊີວາ ແລະ ສົມຈິງກັບການສົນທະນາແບບທໍາມະຊາດ. ນອກນີ້, ຍັງໄດ້ບັນທຶກສຽງຮ້ອງເພງຈໍານວນໜຶ່ງ ແລະ ການອ່ານສຽງ ແມ່ນເຮັດໄດ້ດີໂດຍໄດ້ເນັ້ນການອ່ານຊ້າລົງ ແລະ ອອກສຽງແຕ່ລະຄໍາ ໄດ້ຢ່າງຈະແຈ້ງ ເພື່ອໃຫ້ນັກຮຽນຊັ້ນ ປ5 ຂອງລາວ ເຂົ້າໃຈ ແລະ ປະຕິບັດຕາມປຶ້ມແບບຮຽນ.

ຄູ່ມືຄູວິຊາພາສາອັງກິດ ຊັ້ນ ປ5

☛ ອ່ານຕໍ່ໜ້າ 2

**ຍ້ອງຍໍນັກຮຽນ...**

ຈະມີສຽງເພງທັງໝົດ 104 ສຽງ. ນອກນັ້ນມີຄໍາແນະນໍາກ່ຽວກັບຟາຍສຽງທີ່ຈະໃຊ້ ແລະ ລາຍລະອຽດຂອງສຽງ ທັງພາສາອັງກິດ ແລະ ພາສາລາວ. ການນໍາໃຊ້ສື່ການສຽງຈະຊ່ວຍໃຫ້ຄູລາວ ສາມາດນໍາພາການສອນພາສາອັງກິດ ໃຫ້ນັກຮຽນໂດຍໃຊ້ສຽງທີ່ສົມຈິງ, ພ້ອມທັງເປີດໂອກາດໃຫ້ນັກຮຽນໄດ້ຟັງສໍານຽງພາສາອັງກິດທີ່ຫລາກຫລາຍ ແລະ ເຮັດໃຫ້ຜູ້ຮຽນມີຄວາມຕື່ນຕົວ ແລະ ມ່ວນຊື່ນ.

ຟາຍສຽງແມ່ນຈະອັດໃສ່ຢູເອັສບີແລະ ຈັດສົ່ງໃຫ້ແກ່ທຸກໂຮງຮຽນໃນ ສປປ ລາວ ເຊິ່ງສາມາດໃຫ້ດາວໂລດ ແລະ ຟັງໄດ້ຜ່ານທາງຊ່ອງທາງຢູທູບ: ວີດີໂອສໍາລັບການພັດທະນາຄູ ແລະຜ່ານທາງແພລດຟອມ ທັງປັນຍາລາວ ຂອງກະຊວງສຶກສາທິການ ແລະ ກິລາ.

| 2023-05-11 | Newspaper | Vientiane Mai | Page 5 |
| --- | --- | --- | --- |



ຍ້ອງຍໍນັກຮຽນຕ່າງປະເທດທີ່ບັນທຶກສຽງ ສຳລັບຫຼັກສູດວິຊາພາສາອັງກິດ

| 2023-05-15 | Newspaper | Economic and Commerce | Page 3 |
| --- | --- | --- | --- |



ເສດຖະກິດ ການຄ້າ 15.05.2023 ສຶກສາ / ຄຳຄົມ - ພາສາລາວ B3

# ຫຼັກສູດພາສາອັງກິດຂັ້ນ ປ 5 ສະບັບປັບປຸງໃໝ່ ຈະເປີດໃຫ້ນຳໃຊ້ໃນເດືອນກັນຍາ 2023 ນີ້

ກະຊວງສຶກສາທິການ ແລະ ກິລາ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານໃນ ສປປ ລາວ ( ແຜນງານບີຄວາ ), ສຳລັບຫຼັກສູດຂັ້ນ ປ 5 ສະບັບປັບປຸງໃໝ່ ທີ່ຈະໄດ້ເລີ່ມຕົ້ນນຳໃຊ້ໃນສົກຮຽນໃໝ່ເດືອນກັນຍາ 2023 ຕໍ່ໄປນີ້ ນັກຮຽນລາວຈະຮຽນພາສາອັງກິດແບບມ່ວນຊື່ນ ພ້ອມທັງຈະໄດ້ຟັງສຽງເວົ້າທີ່ມີຫຼາກຫຼາຍຂອງສຳນຽງຈາກຜູ້ທີ່ເວົ້າພາສາອັງກິດເປັນພາສາຫຼັກ. ປີນີ້ແມ່ນປີສຸດທ້າຍຂອງການປັບປຸງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່ ເຊິ່ງໄດ້ເລີ່ມຕົ້ນມາແຕ່ປີ 2019.

ທ່ານ ຄຳຈັນ ຮອງຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ( ສວສ ) ໄດ້ກ່າວວ່າ: " ຄູຊັ້ນປະຖົມຈະນຳໃຊ້ຟາຍສຽງໃນການກະກຽມບົດຮຽນ ແລະ ຍັງຈະເປີດສອນໃນຫ້ອງຮຽນໂດຍກົງ. ຍ້ອນການເຂົ້າຮ່ວມຂອງນັກສຶກສາຕ່າງປະເທດ, ນັກສຶກສາລາວຈະສາມາດຟັງການເວົ້າໂດຍສຽງຂອງຜູ້ທີ່ເປັນເຈົ້າຂອງພາສາ ແລະ ຈະໄດ້ຮັບຟັງສຳນຽງທີ່ຫຼາກຫຼາຍໃນພາສາອັງກິດ ".

ນັກຮຽນໄດ້ບັນທຶກສຽງໃນບົດສົນທະນາ ແລະ ມີຫຼາຍບົດບາດເພື່ອໃຫ້ບົດຮຽນມີຊີວິດຊີວາ ແລະ ສົມຈິງກັບການສົນທະນາແບບທຳມະຊາດ, ພວກເຂົາຍັງໄດ້ບັນທຶກສຽງຮ້ອງເພງຈຳນວນໜຶ່ງ ແລະ ສຽງຂອງພວກເຂົາແມ່ນມ່ວນຫຼາຍ. ການອ່ານສຽງຂອງນັກຮຽນແມ່ນເຮັດໄດ້ດີ - ພວກເຂົາໄດ້ເນັ້ນການອ່ານຊ້າລົງ ແລະ ອອກສຽງແຕ່ລະຄຳຢ່າງຈະແຈ້ງ ເພື່ອໃຫ້ນັກຮຽນຂັ້ນ ປ 5 ຂອງລາວ ເຂົ້າໃຈ ແລະ ປະຕິບັດຕາມປຶ້ມແບບຮຽນ. ພວກເຂົາຍັງເຮັດໄດ້ດີໃນ " ການສະແດງທາງສຽງ " ເພື່ອເຮັດໃຫ້ຟາຍສຽງຄືເຫດການແທ້ ແລະ ຄືຢູ່ໃນເຫດການດັ່ງກ່າວ.

ນັກຮຽນໄດ້ອັດສຽງໃນຫ້ອງບັນທຶກສຽງຂອງກະຊວງສຶກສາທິການ ແລະ ກິລາ ທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ( ສວສ ) ເຊິ່ງຖືກນຳໃຊ້ປະຈຳວັນເພື່ອສິ່ງຂ່າວກ່ຽວກັບການສຶກສາຜ່ານລາຍການວິທະຍຸຂອງ ສວສ. ພວກເຂົາຮູ້ສຶກປະທັບໃຈຫຼາຍທີ່ໄດ້ມາກະຊວງ ແລະ ໄດ້ຮຽນຮູ້ກ່ຽວກັບເຕັກໂນໂລຊີທີ່ກ່ຽວຂ້ອງກັບການບັນທຶກ ແລະ ການຕັດຕໍ່ສຽງ. ພວກເຂົາໄດ້ພົບກັບຜູ້ຊ່ຽວຊານດ້ານການຂຽນຫຼັກສູດ, ທີມງານວິຊາການດ້ານສຽງຈາກ ສວສ ແລະ ທີມງານແຜນງານບີຄວາ. ພວກເຂົາຍັງໄດ້ເບິ່ງປຶ້ມແບບຮຽນຂັ້ນ ປ 5 ສະບັບປັບປຸງໃໝ່ ເພື່ອເປັນແນວຄວາມຄິດທີ່ດີເພື່ອເຊື່ອມໂຍງກັບບົດສຽງອ່ານຂອງພວກເຂົາ. ນັກສຶກສາໄດ້ຊື່ນຊົມບັນດາຮູບແຕ້ມຂອງປຶ້ມແບບຮຽນທີ່ມີສີສັນສວຍງາມ ແລະ ມີຄວາມໝາຍທີ່ຮວມເອົາຕົວແທນຂອງນັກຮຽນຈາກຫຼາກຫຼາຍຊົນເຜົ່າ, ການມີສ່ວນຮ່ວມຢ່າງສະເໝີພາບຂອງເດັກຊາຍ - ເດັກຍິງ ແລະ ນັກຮຽນພິການ.

ສຳລັບຂັ້ນ ປ 5 ຄູ່ມືຄູວິຊາພາສາອັງກິດຊັ້ນ ປ 5 ຈະມີສຽງເພງທັງໝົດ 104 ສຽງ ພ້ອມທັງມີຄຳແນະນຳກ່ຽວກັບຟາຍສຽງທີ່ຈະໃຊ້ ແລະ ລາຍລະອຽດຂອງສຽງທັງພາສາອັງກິດ ແລະ ພາສາລາວ. ການນຳໃຊ້ສື່ດ້ານສຽງຈະຊ່ວຍໃຫ້ຄູລາວສາມາດນຳພາການສອນພາສາອັງກິດໃຫ້ນັກຮຽນໂດຍໃຊ້ສຽງທີ່ສົມຈິງ, ເປີດໂອກາດໃຫ້ນັກຮຽນໄດ້ຟັງສຳນຽງພາສາອັງກິດທີ່ຫຼາກຫຼາຍ ແລະ ເຮັດໃຫ້ບົດຮຽນມີຄວາມຫ້າວຫັນ ແລະ ມ່ວນຊື່ນ.

ຟາຍສຽງແມ່ນຈະອັດໃສ່ຢູເອັດສ໌ບີ ແລະ ຈັດສົ່ງໃຫ້ແກ່ທຸກໂຮງຮຽນໃນ ສປປ ລາວ ພ້ອມທັງຈະສາມາດໃຫ້ດາວໂຫຼດ ແລະ ຟັງໄດ້ຜ່ານທາງຊ່ອງທາງຢູທູບ: ວີດີໂອສຳລັບການພັດທະນາຄູ Teacher Development Videos ແລະ ຜ່ານທາງແພັດຟອມ ຄັງປັນຍາລາວ Khang Panya Lao ຂອງກະຊວງສຶກສາທິການ ແລະ ກິລາ.

| 2023-05-05 | Vientiane International School Facebook |
|---|---|

Vientiane International School
4d ·

Our Yuu-Nok Creative Assembly takes to the auditorium! 🎤

It was a vibrant secondary assembly earlier this Wednesday in our new auditorium. The talented student and special guest performances on stage wowed our community. We would also like to thank the representatives from the Australian Embassy, the Research Institute of Education and Science, and BEQUAL (Basic Education Quality and Access in Lao PDR) for presenting certificates of appreciation for our students who volunteered to produce audio materials for the BEQUAL English language textbooks again this year.

ໃນຊົ່ວໂມງຮຽນ "ຢູ່ນອກ" ບັນດານັກຮຽນຊັ້ນມັດທະຍົມ ໄດ້ໂຮມຊຸມນຸມກັນຢູ່ໃນຫ້ອງໂຖງໃຫມ່! 🎤

ມັນເປັນການໂຮມຊຸມນຸມຂອງຊັ້ນມັດທະຍົມທີ່ມີຊີວິດຊີວາ ທີ່ເກີດຂຶ້ນໃນຕົ້ນອາທິດຂອງວັນພຸດ. ບັນດານັກຮຽນທີ່ເຕັມໄປດ້ວຍພອນສະຫວັນ ແລະ ນັກຮຽນສະແດງຢູ່ເທິງເວທີ ໄດ້ສະແດງແກ່ຊຸມຊົນສະມາຄົມຂອງພວກເຮົາ. ພວກເຮົາຢາກຂອບໃຈຕາງຫນ້າຈາກ ສະຖານທູດ ອົອສເຕເລຍ ຂອງໂຄງການ ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ (BEQUAL) ທີ່ໄດ້ມາມອບໃບຍ້ອງຍໍໃຫ້ແກ່ນັກຮຽນຂອງພວກເຮົາທີ່ໄດ້ເປັນອາສາສະຫມັກໃນການຮ່ວມມືຜະລິດສື່ອຸປະກອນພາຍສຽງສຳລັບປື້ມແບບຮຽນ ວິຊາພາສາອັງກິດ.

#SchoolAssembly #StudentVolunteer #StudentPerformance #SecondarySchool #VISLao
#VientianeInternationalSchool



| 2023-05-10 | Edu-Sport TV online Facebook |
|---|---|

Edu-Sport TV online
3h ·

ຍ້ອງຍໍນັກຮຽນທີ່ບັນທຶກສຽງສຳລັບຫຼັກສູດວິຊາພາສາອັງກິດຊັ້ນ ປ.5 ສະບັບປັບປຸງໃໝ່

//////////////////////////////

ເມື່ອບໍ່ດົນຜ່ານມາ, ທີ່ໂຮງຮຽນນາງຊາດວຽງຈັນ ລັດຖະບານອົດສະຕຣາລີ ແລະ ກະຊວງສຶກສາທິການ ແລະ ກິລາ ຍ້ອງຍໍນັກຮຽນຕ່າງປະເທດທີ່ບັນທຶກສຽງສຳລັບຫຼັກສູດວິຊາພາສາອັງກິດຊັ້ນ ປ.5 ສະບັບປັບປຸງໃໝ່ ຈຳນວນ 6 ຄົນ, ເປັນກຽດຮ່ວມມອບຂອງທ່ານ ທ່ານ ຄຳຈັນ ວັດຖະພອດ, ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ແລະ ທ່ານ ນາງ ວາເລເນັດຊາ ເຂກາຕີ, ເລຂາເອກ ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ, ມີບັນດາແຂກ ແລະ ຄູອາຈານເຂົ້າຮ່ວມ.

ນັກຮຽນໄດ້ບັນທຶກສຽງໃນບົດສົນທະນາ ແລະ ມີຫຼາຍບົດບາດເພື່ອໃຫ້ບົດຮຽນມີຊີວິດຊີວາ ແລະ ສົມຈິງກັບການສົນທະນາແບບທຳມະຊາດ ແລະ ຍັງໄດ້ບັນທຶກສຽງຮ້ອງເພງຈຳນວນໜຶ່ງ. ການອ່ານສຽງຂອງນັກຮຽນແມ່ນເຮັດໄດ້ດີ ໂດຍເນັ້ນການອ່ານຊ້າລົງ ແລະ ອອກສຽງແຕ່ລະຄຳຢ່າງຈະແຈ້ງ ເພື່ອໃຫ້ນັກຮຽນຊັ້ນ ປ.5 ຂອງລາວເຂົ້າໃຈ ແລະ ປະຕິບັດຕາມປຶ້ມແບບຮຽນ. ທັງນີ້, ນັກຮຽນຍັງເຮັດໄດ້ດີໃນ 'ການສະແດງທາງສຽງ' ເພື່ອເຮັດໃຫ້ພາຍສຽງຄືເຫດການແທ້ ແລະ ຄືຢູ່ໃນເຫດການດັ່ງກ່າວ. ໂດຍໄດ້ອັດສຽງໃນຫ້ອງບັນທຶກສຽງຂອງກະຊວງສຶກສາທິການ ແລະ ກິລາ ທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ), ເຊິ່ງຖືກນຳໃຊ້ປະຈຳວັນເພື່ອສິ່ງຂ່າວກ່ຽວກັບການສຶກສາຜ່ານລາຍການວິທະຍຸຂອງ ສວສ.

ວິຊາພາສາອັງກິດ, ວິຊາພາສາລາວ ແລະ ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ເປັນວິຊາທີ່ສອນຢູ່ໃນຊັ້ນ ປ.5 ແມ່ນເປັນວິຊາທີ່ໄດ້ຮັບການພັດທະນາໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ. ນັກຮຽນຊັ້ນປະຖົມສຶກສາໃນ ສປປ ລາວ ແມ່ນໄດ້ເລີ່ມຮຽນພາສາອັງກິດຕັ້ງແຕ່ຊັ້ນ ປ.3 ເມື່ອນັກຮຽນໄດ້ຮຽນພາສາໃໝ່ ແລະ ຕ້ອງການເຂົ້າເຖິງພາສາດັ່ງກ່າວໃນຫຼາຍໂອກາດເພື່ອຟັງ. ແຕ່ວ່າມັນອາດເປັນສິ່ງທ້າທາຍສຳລັບຄູໃນ ສປປ ລາວ ທີ່ຈະສາມາດຍົກຕົວຢ່າງການອອກສຽງພາສາອັງກິດ ຫາກຄູເອງກໍ່ຍັງບໍ່ທັນໝັ້ນໃຈໃນລະດັບພາສາອັງກິດຂອງຕົນ.

ສຳລັບຊັ້ນ ປ.5 ຄູ່ມືຄູວິຊາພາສາອັງກິດຊັ້ນປ 5 ຈະມີສຽງເພງທັງໝົດ 104 ສຽງ ພ້ອມທັງມີຄຳແນະນຳກ່ຽວກັບພາຍສຽງທີ່ຈະໃຊ້ ແລະ ລາຍລະອຽດຂອງສຽງທັງພາສາອັງກິດ ແລະ ພາສາລາວ. ການນຳໃຊ້ສື່ດ້ານສຽງຈະຊ່ວຍໃຫ້ຄູລາວສາມາດນຳພາການສອນພາສາອັງກິດໃຫ້ນັກຮຽນໂດຍໃຊ້ສຽງທີ່ສົມຈິງ, ເປີດໂອກາດໃຫ້ນັກຮຽນໄດ້ຟັງສຳນຽງພາສາອັງກິດທີ່ຫຼາກຫຼາຍ ແລະ ເຮັດໃຫ້ບົດຮຽນມີຄວາມຫ້າວຫັນ ແລະ ມ່ວນຊື່ນ.

ພາຍສຽງແມ່ນຈະອັດໃສ່ຢູເອັດສບີ ແລະ ຈັດສົ່ງໃຫ້ແກ່ທຸກໂຮງຮຽນໃນ ສປປ ລາວ ພ້ອມທັງສາມາດໃຫ້ດາວໂຫຼດ ແລະ ຟັງໄດ້ຜ່ານທາງຊ່ອງທາງຢູທູບ: ວີດີໂອສຳລັບການພັດທະນາຄູ Teacher Development Videos ແລະ ຜ່ານທາງແພັດຟອມ ຄັງປັນຍາລາວ Khang Panya Lao ຂອງກະຊວງສຶກສາທິການ ແລະ ກິລາ.

ນັບແຕ່ຊັ້ນ ປ.3, ກະຊວງສຶກສາທິການ ແລະ ກິລາ ພ້ອມດ້ວຍແຜນງານບີຄວາ, ໄດ້ຮ່ວມມືກັບໂຮງຮຽນນາງຊາດວຽງຈັນ (VIS) ຜະລິດສື່ພາຍສຽງສຳລັບຫຼັກສູດພາສາອັງກິດ ເປັນເວລາ 3 ປີຕິດຕໍ່ກັນ, ແລະ ກໍ່ມີນັກຮຽນຫຼາຍຄົນໄດ້ສະໝັກໃຈເຂົ້າຮ່ວມການບັນທຶກສຽງສຳລັບວິຊາພາສາອັງກິດ.

ກະຊວງສຶກສາທິການ ແລະ ກິລາ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ), ແມ່ນຢູ່ໃນຂັ້ນຕອນສຸດທ້າຍຂອງຂອດການຜະລິດສື່ການຮຽນ-ການສອນ ສຳລັບຫຼັກສູດຊັ້ນ ປ. 5 ສະບັບປັບປຸງໃໝ່ ທີ່ຈະໄດ້ເລີ່ມຕົ້ນນຳໃຊ້ໃນສົກຮຽນໃໝ່ ເດືອນກັນຍາ 2023 ນີ້. ປີນີ້ແມ່ນປີສຸດທ້າຍຂອງການປັບປຸງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່ ເຊິ່ງໄດ້ເລີ່ມຕົ້ນມາແຕ່ປີ 2019.




| 2023-05-10 | Vientiane Mai Facebook |
|---|---|

Vientiane Mai
4h ·

ຍ້ອງຍໍນັກຮຽນຕ່າງປະເທດທີ່ປະກອບສ່ວນບັນທຶກສຽງສຳລັບຫຼັກສູດວິຊາພາສາອັງກິດຂັ້ນ ປ5

.......................................................................

ລັດຖະບານອົດສະຕຣາລີ ແລະ ກະຊວງສຶກສາທິການ ແລະ ກີລາ (ສສກ) ຍ້ອງຍໍນັກຮຽນຕ່າງປະ ເທດທີ່ບັນທຶກສຽງສຳລັບຫຼັກສູດວິຊາພາສາອັງກິດຂັ້ນ ປ5 ສະບັບປັບປຸງໃໝ່ ເມື່ອບໍ່ດົນມານີ້ ທີ່ໂຮງຮຽນ ນາງຊາດວຽງຈັນ (VIS) ນະຄອນຫຼວງວຽງຈັນ.
ອ່ານຂໍ້ມູນເພີ່ມຕື່ມ👇
https://v2.vientianemai.net/archives/57212
#VientianeMai



